**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມໃຫຍ່ການເມືອງ

ຫ້ອງການ

ເລກທີ.716..../ຫກ

ນະຄອນຫຼວງວຽງຈັນ, ວັນທີ.24.ກຸມພາ.2026

# ໜັງສືແຈ້ງເຊີນປະມູນ

1. ກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ໄດ້ຮັບອະນຸມັດຕົວເລກງົບປະມານ ປະຈຳປີ 2026 ເພື່ອດຳເນີນການປະມູນຈັດຊື້ເຄື່ອງຮັບໃຊ້ຫ້ອງການ, ໃຫ້ແກ່ວຽກງານການບໍລິຫານ ຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.
2. ຂໍເຊີນບັນດາຫ້າງຮ້ານເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງສຳລັບການຈັດຊື້ເຄື່ອງຮັບໃຊ້ຫ້ອງການ ຂອງກົມໃຫຍ່ການເມືອງ ປ້ອງກັນຄວາມສະຫງົບ ປະຈຳປີ 2026 ກຳນົດໄລຍະເວລາສົ່ງມອບສິນຄ້າແມ່ນ 14 ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບ ເປີດກວ້າງລາຄາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ຫ້ອງການ ກົມໃຫຍ່ການເມືອງ ປ້ອງກັນຄວາມສະຫງົບ ຫ້ອງປະຊຸມຊັ້ນ IV ຂອງກົມໃຫຍ່ການເມືອງ ປ້ອງກັນຄວາມສະຫງົບ, ເບີໂທຕິດຕໍ່ 021 970 629, 020 29982994 ເລີ່ມແຕ່ວັນທີ 24 ກຸມພາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.
5. ຊອງປະມູນຕ້ອງສົ່ງກ່ອນເວລາ **8:30 ໂມງ** ຂອງວັນທີ **24 ມີນາ 2026** ທີ່ຫ້ອງການກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ແລະ ຊອງປະມູນຈະໄດ້ເປີດໃນເວລາ **08:30 ໂມງ** ຂອງວັນທີ **24 ມີນາ 2026** ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນທີ່ຫ້ອງປະຊຸມຊັ້ນ IV ຂອງກົມໃຫຍ່ການເມືອງ ປ້ອງກັນຄວາມສະຫງົບ.
6. ທຸກຊອງປະມູນຕ້ອງໄດ້ປະກອບມີການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນມາພ້ອມ.

**ຫົວໜ້າຫ້ອງການ**

**ນິວອນ ບຸນວັນນາ**

สแกนด้วย CamScanner